ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພະນັກງານບັນຊີ ແລະ ການເງິນ ສໍາລັບ ທະນາຄານ ແຫ່ງ ປສສ ລາວ ໄດ້ຮັບການຍົກລະດັບທີ່ແຂວງອຸດົມໄຊ




ໃນວັນທີ່ 4 ມິຖຸນາ 2019 ນີ້ ກົມບັນຊີ ແລະ ການເງິນ ທະນາຄານ ແຫ່ງ ສປປ ລາວ ໄດ້ຈັດຊຸດຝຶກອົບຮົມ ວຽກງານບັນຊີແລະການເງິນຂຶ້ນ ທີ່ຫ້ອງປະຊຸມຂອງສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ແຂວງອຸດົມໄຊ, ໂດຍເປັນກຽດເຂົ້າຮ່ວມຂອງທ່ານ ພອນສະຫວັນ ຄໍາພາວົງ ຮອງຫົວໜ້າກົມບັນຊີ ແລະ ການເງິນ ທະນາຄານແຫ່ງ ສປປ ລາວ, ມີທ່ານ ບຸນໄທ ສຸພັດທອນ ຫົວໜ້າສາຂາ ທະນາຄານແຫ່ງ ສປປລາວ ພາກເໜືອທີ່ແຂວງອຸດົມໄຊ ມີບັນດາ ສໍາມະນາກອນ ທີ່ມາຈາກ ສໍານັກງານໃຫຍ່, ສະຖາບັນການທະນາຄານ, ສູນເກັບຂໍ້ໜີ້, ສໍານັກງານຂໍ້ມູນຕ້ານການຟອກເງິນ, ສໍານັກງານຄະນະກໍາມະການຄຸ້ມຄອງຕະຫຼາດຫຼັກຊັບ, ມີສາຂາ ທຫລ.ຈສ, ທຫລ.ສຂ, ທຫລ.ຫຼບ, ທຫລ.ຊຂ ແລະ ທຫລ.ອຊ.






ເພື່ອເປັນການຍົກລະດັບ ແລະ ຜູກແໜ້ນຄວາມສາມັກຄີຂອງອ້າຍນ້ອງພະນັກງານໃນຂົງເຂດທະນາຄານກາງດ້ວຍກັນ ໃຫ້ມີຄຸນນະພາບ ແລະ ມິດຕະພາບທີ່ດີ ເຮັດໃຫ້ການເຮັດວຽກສອດຄ່ອງ ແລະ ເປັນເອກະພາບກັນໃນທົ່ວປະເທດ, ເຊິ່ງຊຸດຝຶກອົບຮົມຄັ້ງນີ້ ຜູ້ສຳມະນາກອນຈະໄດ້ຮຽນຮູ້ກ່ຽວກັບນິຕິກຳບັນຊີ, ການສ້າງເອກະສານລາຍງານການເງິນ, ການແລກປ່ຽນບົດຮຽນການຈັດຕັ້ງປະຕິບັດວຽກງານຕົວຈິງ, ວຽກງານການເງິນງົບປະມານຂອງ ທຫລ. ພາບລວມ, ການສ້າງແຜນງົບປະມານປະຈຳປີ, ການຕິດຕາມ ແລະ ສະຫຼຸບງົບປະມານ, ການສະຫຼຸບສະຖານະການການເງິນຂອງ ທຫລ, ພ້ອມນີ້ ຜູ້ສຳມະນາກອນຍັງຈະໄດ້ພ້ອມກັນປະຕິບັດຕົວຈິງ ເພື່ອແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ , ໂອກາດກ່າວເປີດຊຸດຝຶກອົບຮົມ ທ່ານ ບຸນໄທ ສຸພັດທອນ ຫົວໜ້າທະນາຄານແຫ່ງ ສປປລາວ ພາກເໜືອທີ່ແຂວງອຸດົມໄຊ ໄດ້ຮຽກຮ້ອງໃຫ້ ສຳມະນາກອນຈົ່ງເອົາໃຈໃສ່ເຂົ້າໃນການຝຶກອົບຮົມ ຍາດເອົາຄວາມຮູ້ເພື່ອນຳໄປພັດທະນາຕົນເອງກໍ່ຄືວຽກງານການເງິນ-ການບັນຊີຂອງທະນາຄານໃຫ້ມີຄວາມກ້າວໜ້າ, ເຮັດໃຫ້ການສະຫຼຸບຂໍ້ມູນສະຖິຕິທາງດ້ານການເງິນມີຄວາມສະດວກສະບາຍ ແລະ ທັນສະໄໝ່ ແລະ ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າວຽກໃຫ້ໄດ້ດີ. ຊຸດຝຶກອົບຮົມຄັ້ງນີ້ ແມ່ນຈະໄດ້ດຳເນີນໄປຈົນຮອດວັນທີ່ 7 ມິຖຸນາ 2019 ຈຶ່ງສຳເລັດ.

**# ຂ່າວໂດຍ: ທ່ານ ທົງຄຳ ກອງຊັບ**

**# ພາບໂດຍ: ສອນລະເກດ ພິລາສັກ**